
ການປູກມອນ-ລ້ຽງມ້ອນ
SILK PRODUCTION

# ບົດທີ1

## ມ້ອນພື້ນເມືອງລາວ

### 1.1 ຮູບຮ່າງລັກຊະນະ ແລະ ວົງຈອນຊີວິດຂອງໂຕມ້ອນ

ກ. ມ້ອນແມ່ນສັດປະເພດແມງກະບີ້ກາງຄືນ, ມີວົງຈອນຊີວິດທີ່ປ່ຽນແປງໄປຕາມແຕ່ລະຂັ້ນຕອນທີ່ແຕກຕ່າງກັນດັ່ງນີ້:

- ໄລຍະໄຂ່ໃຊ້ເວລາ 9 – 12 ວັນ.
- ໄລຍະເປັນໂຕບົ້ງມ້ອນໃຊ້ເວລາກິນໃບມອນ 23 - 25 ວັນ.
- ໄລຍະເປັນດັກແດ້ໃຊ້ເວລາ 7 - 9 ວັນ.
- ໄລຍະແມງກະບີ້ໃຊ້ເວລາ 2 - 3 ວັນ.



( ຮູບວົງຈອນຊີວິດຂອງມ້ອນ )

### 1.2 ພັນມ້ອນພື້ນເມືອງ

- ມ້ອນນ້ອຍນາງໜິ່ນຝັກຫລອກສີເຫລືອງ ຫລື ຂາວ.
- ມ້ອນນາງລາຍຝັກຫລອກສີເຫລືອງ ຫລື ຂາວ.

- ມ້ອນນາງຟ້າຝັກຫລອກເຫລືອງ ຫລື ຂາວ ( ສໍາລັບມ້ອນນາງຟ້າໄຂ່ແຕກເອງປີລະຄັ້ງ ).




( ຮູບໂຕມ້ອນພື້ນເມືອງ )

## 1.3 ການປັບປຸງແນວພັນໂຕມ້ອນ

ການປັບປຸງແນວພັນໂຕມ້ອນ ມີຄວາມສໍາຄັນອັນໃຫຍ່ຫລວງຕໍ່ດ້ານເສດຖະກິດ. ມ້ອນເປັນສັດຊະນິດໜຶ່ງທີ່ໄດ້ເອົາໃຈໃສ່ ປັບປຸງພັນຢ່າງຕໍ່ເນື່ອງ, ຖ້າລ້ຽງພັນເກົ່າຕໍ່ເນື່ອງເປັນເວລາຫລາຍປີຈະເຮັດໃຫ້ການລ້ຽງມ້ອນມີບັນຫາເຊັ່ນ: ມ້ອນຕິດເຊື້ອພະຍາດໄດ້ງ່າຍ ແລະ ຮັງຫລອກບາງ ຫລື ເອີ້ນວ່າ: ມ້ອນກາຍພັນ.

### ສິ່ງທີ່ຄວນເຮັດ:

ໂຕມ້ອນທີ່ຈະລ້ຽງຮັກສາພັນຕ້ອງເລືອກຈາກການລ້ຽງແບບພິເສດ, ບໍ່ໃຫ້ລ້ຽງປົນກັບມ້ອນທີ່ລ້ຽງທົ່ວໄປ, ມີການຄັດພັນມ້ອນຕ້ອງເລີ່ມຈາກເປັນໂຕມ້ອນ, ຝັກຫລອກ, ດັກແດ້ ແລະ ເປັນແມ່ບີ້. ຈາກນັ້ນໃຫ້ປະສົມພັນຂ້າມກະດົ້ງ ຫລື ປະສົມພັນຂ້າມເຂດລ້ຽງຖ້າມີເງື່ອນໄຂ, ຂ້າມສາຍເລືອດຍິ່ງເປັນການດີ.



( ຮູບການລ້ຽງມ້ອນສຳລັບເຮັດແມວພັນ )



ຂຽນໂດຍ: ທ່ານ ຄຳພັນ ພັນທະວົງ.
ບັນນາທິການໂດຍ: ທ່ານ ຄຳເສີມ ມະນີວົງ.
ທ່ານ ໂພໄຊ ຈັນທະວົງສາ.
ທ່ານ ຄຳພຸຍ ໄຊທາລາດ.
ອອກແບບໜ້າປົກໂດຍ: ທ່ານ ປານຕະນະ ອາລຸນສະຫັວດ.
ຈັດໜ້າໂດຍ: ນາງ ສີໄພ.
ເຈົ້າຂອງ: ສູນອົບຮົມຮ່ວມພັດທະນາ ( PADETC ).

- ການສາວໄໝລວມ ( ສາວໄປເລື້ອຍໆໂດຍບໍ່ໄດ້ແຍກໄໝເປືອກໄໝປາຍ ຫລື ໄໝຍອດເລີຍເປັນໄໝປະເພດດຽວກັນ ).
- ການສາວໄໝຍອດຕ້ອງມີການແຍກເປັນແຕ່ລະຂັ້ນຕອນລະຫວ່າງໄໝເປືອກ, ໄໝຍອດ ແລະ ໄໝປາຍ.

**ສ. ການຮັກສາສີຂອງເສັ້ນໄໝ**

ແຍກຮັງຫລອກເປື້ອນ, ຮັງທີ່ມີມ້ອນຕາຍຢູ່ໃນອອກໃຫ້ໝົດ, ປ່ຽນນ້ຳໜໍ້ສາວໄໝຖ້າເຫັນວ່ານ້ຳໃນໜໍ້ກ◌ໍາ

**ຊ. ການສາວໄໝເປືອກນອກ**

ເປັນການແຍກໄໝເປືອກທີ່ບໍ່ງາມອອກ, ກ່ອນທີ່ຈະສາວໄໝຍອດ, ໄໝເປືອກມີພຽງ 15% ໃນຮັງຫລອກທເທົ່ານັ້ນ

**ຍ. ການສາວໄໝຍອດ.**

ເປັນການຍົກຄຸນນະພາບເສັ້ນໄໝ ແບບນຳເຄື່ອງສາວໄໝແບບປັບປຸງ, ໄໝຍອດເປັນເສັ້ນໄໝທີ່ຢູ່ທັງກາງຂອງຮັງຫລອກ, ໄໝຍອດມີປະມານ 60 – 65 % ໃນຮັງຫລອກ, ເປັນເສັ້ນໄໝທີ່ມີຄຸນນະພາບສູງ.



# ບົດທີ2

# ມອນ

## 2.1 ພັນຕົ້ນມອນ

ພັນຕົ້ນມອນທີ່ມີຢູ່ໃນປະເທດລາວ ( ຕົ້ນມອນພື້ນເມືອງ ) ມີ:

- ຕົ້ນມອນແກ້ວ, ມອນຂີ້ຮີດ, ມອນນ້ອຍ, ມອນຍອດກຳ ແລະ ມອນກິນໝາກ.



( ຮູບຕົ້ນມອນແຕ່ລະຊະນິດ )

## 2.2 ການເລືອກໃຊ້ພັນຕົ້ນມອນ

ກ່ອນທີ່ຈະນຳເອົາພັນມອນໃດໜຶ່ງມາປູກໃຫ້ຄຳນຶງເບິ່ງເງື່ອນໄຂດັ່ງຕໍ່ໄປນີ້:

- ກິ່ງມອນທີ່ເອົາມາເຮັດແນວພັນຕ້ອງສົມບູນບໍ່ເປັນພະຍາດ.
- ຂະໜາດເສັ້ນຜ່າໃຈກາງຂອງກິ່ງຕ້ອງມີ 1.5 ຊັງຕີແມັດຂຶ້ນໄປ.
- ມີອາຍຸແຕ່ 6 ເດືອນຫາ 10 ເດືອນ.
- ຂະໜາດຂອງໃບຕ້ອງປານກາງຫາໃຫຍ່.

- ຕຸ່ມຕາຕ້ອງຖີ່.
- ມີຄຸນຄ່າອາຫານສູງ.
- ຕັດແຕ່ງແລ້ວແຕກກິ່ງງ່າຫລາຍ.
- ທົນຕໍ່ສະພາບແວດລ້ອມໄດ້ດີ.
- ປູກແລ້ວມີອາຍຸຍາວໃຫ້ໃບຫລາຍ.

## 2.3 ການຂະຫຍາຍພັນຕົ້ນມອນ

ຕົ້ນມອນສາມາດຂະຫຍາຍພັນໄດ້ງ່າຍເຊັ່ນ: ການປູກງ່າໃນສວນ ໂດຍກົງ ຫລື ການຊຳໃນໝານ ກ່ອນເອົາ ໄປປູກ. ການຊຳກໍນິຍົມກັນໃຊ້ 2 ວິທີຄື: ການຊຳໃນໝານກ້າເບັ້ຍ ແລະ ຊຳໃນຖົງຢາງປລາສະຕິກ

- ການປູກງ່າໃນສວນໂດຍກົງກໍສະດວກສະບາຍແຕ່ເປືອງທ່ອນພັນ, ການໃຫ້ໃບປີທຳອິດ ບໍ່ສະໝ່ຳສະເໝີເປີເຊັນການ ລອດຕາຍກໍ່ຕ່ຳ ( ດິນແຫ້ງແລ້ງປູກບໍ່ໄດ້ ).



( ຮູບປູກຕົ້ນມອນດ້ວຍກິ່ງໃນປີທຳອິດ )

- ການຊຳໃນໝານໃຊ້ຕົ້ນທຶນຕ່ຳກ່ວາເໝາະສົມກັບການຊຳຈຳນວນຫລາຍຕ້ອງຊຳກ່ອນການ ປູກຢ່າງໜ້ອຍ 3 ເດືອນ.



- ຂະໜາດຂອງເສັ້ນໄໝ ( ກຳນົດຝັກຫລອກໃນໝໍ້ສາວ ) .ການສາວເສັ້ນໄໝແມ່ນ ອີງຕາມຄວາມຕ້ອງການຂອງຕະລາດ ຫລື ມີຈຸດປະສົງ ຈະເອົາໄປເຮັດຫຍັງ ໂດຍທົ່ວໄປຖ້າສາວໄໝລວດກໍຈະເລີ່ມຈາກ 40 - 80 ຮັງ.

**ຄ. ການຕົ້ມຮັງຫລອກ.**

ການຕົ້ມຮັງຫລອກແມ່ນ ການເຮັດໃຫ້ກາວຊີລີຊິນທີ່ຕິດຢູ່ນຳເສັ້ນໄໝນັ້ນລະລາຍ ເພື່ອຈະດຶງເສັ້ນໄໝອອກໄດ້. ການຕົ້ມແມ່ນອີງໃສ່ປະເພດຂອງຮັງຫລອກເຊັ່ນ:

- ຮັງຫລອກດີທຳມະດາຕົ້ມໃນອຸນະພູມ 70 - 80 ອົງສາ.
- ຮັງຫລອກແຝດຕົ້ມໃນອຸນະພູມ 80 - 90 ອົງສາ.
- ຮັງຫລອກອົບແຫ້ງຕົ້ມໃນອຸນະພູມ 90 - 100 ອົງສາ.
- ຖ້ານ້ຳໃນໝໍ້ຕົ້ມເຢັນກ່ວາທີ່ກຳນົດໄວ້ ຈະສາວເສັ້ນໄໝບໍ່ອອກ, ຖ້ານ້ຳໃນໝໍ້ຮ້ອນເກີນກຳນົດຝັກຫລອກໃນໝໍ້ຈະເປື່ອຍ.

**ງ. ການທາວເງື່ອນໄໝ.**

ການທາວເງື່ອນໄໝແມ່ນ ການຈັບສົ້ນ ຫລື ເງື່ອນເສັ້ນໄໝໃນຝັກຫລອກໂດຍໃຊ້ອຸປະກອນໄມ້ຄີບເພື່ອຂີດເອົາເງື່ອນຕາມຄວາມຕ້ອງການ ( ການຈັບສົ້ນເສັ້ນໄໝສະໝ່ຳສະເໝີຈະໄດ້ເສັ້ນໄໝລັງສະໝ່ຳສະເໝີເຊິ່ງສັບຂອງການສາວໄໝເອີ້ນວ່າເສັ້ນໄໝເລິງງາມ).

**ຈ. ການສາວເສັ້ນໄໝ.**

ການສາວໄໝມີ 2 ວິທີຄື:

**ຂ.<u>ສູດຄິດໄລ່ນໍ້າໜັກໄໝດິບຫລັງຈາກຮູ້ເປີເຊັນເສັ້ນໄໝແລ້ວ</u>**

ນໍ້າໜັກໄໝດິບ = (ນໍ້າໜັກຮັງຫລອກເຕັມ X ເປີເຊັນເສັ້ນໄໝ) / 100

## 3.12 <u>ຂັ້ນຕອນດໍາເນີນການສາວໄໝ</u>

- ກ່ອນຈະເກັບຮັງຫລອກນໍາມາສາວເສັ້ນໄໝໃຫ້ສັງເກດວ່າໂຕມ້ອນກາຍເປັນດັກແດ້ ຫລື ຍັງມ້ອນຈະກາຍເປັນດັກແດ້ໃນມື້ທີ່ 5 ( ນັບຈາກມື້ເອົາເຂົ້າຈໍ່ )
- ບໍ່ຄວນສາວເສັ້ນໄໝກ່ອນທີ່ໂຕມ້ອນບໍ່ທັນເປັນດັກແດ້ ( ຝັກຫລອກບໍ່ທັນແຂງ ).
- ດັກແດ້ມ້ອນມີອາຍຸໃນຝັກຫລອກພຽງແຕ່ 7 – 9 ວັນ ຈາກນັ້ນກໍຈະກາຍເປັນແມ່ບີ້ໝົ້ນຝັກຫລອກອອກມາ.

**ກ. <u>ກຽມອຸປະກອນການສາວເສັ້ນໄໝ</u>**

ເຕົາ, ໝໍ້ຕົ້ມຮັງຫລອກ, ໝາກຄ້ວງ ( ເຄື່ອງສາວໄໝ ), ໄມ້ຄີບ, ຈອງຕາຫລີວ, ຊາມ, ອັກປັ່ນໄໝ, ເຄື່ອງເຮັດປອຍໄໝ, ຝ້າຍໄພໄໝ, ແລະ ເຄື່ອງໃຊ້ທີ່ຈໍາເປັນອື່ນໆ.

**ຂ. <u>ຂັ້ນຕອນດໍາເນີນການສາວເສັ້ນໄໝ.</u>**

ກ່ອນການລົງມືສາວເສັ້ນໄໝຕ້ອງຄັດເລືອກຮັງຫລອກກ່ອນເຊັ່ນ: ຮັງ ຫລອກທີ່ສົມບູນດີ ( ງາມ ) ,ແຝດ, ດ້ານ, ຜິດຮູບປະພັນ, ເປື້ອນ, ໜອນແມງວັນເຈາະໃຫ້ແຍກສາວຄົນລະຄັ້ງ.



- ການຊໍາໃນຖົງຢາງປຼາສະຕິກໃຊ້ຫີນຕົ້ນສູງຕ້ອງຫົດນໍ້າສໝໍ່າສະເໝີ ແຕ່ສະດວກເວລາຂົນສົ່ງເປີເຊັນການລອດຕາຍກໍສູງ.



( ຮູບໜານຊໍາມອນ )

## 2.4 <u>ເລືອກສະຖານທີ່ເຮັດສວນມອນ</u>

ກ່ອນອື່ນຕ້ອງຄໍານຶງເຖິງສະພາບຂອງດິນຕ້ອງເປັນດິນທີ່ມີຄຸນນະພາບດີ ດິນຊາຍປົນດິນໜຽວ ( ດິນແຄມນໍ້າ ) ph>5 ມີໜ້າດິນເລິກບໍ່ຕໍ່າກ່ວາ 1 ແມັດເປັນດິນຊຸ່ມຊື່ນ ເໝາະສົມດີ ( ບໍ່ແຫ້ງແລ້ງເກີນໄປ, ນໍ້າບໍ່ຂັງ ).

ສວນມອນຕ້ອງບໍ່ຢູ່ຫ່າງໄກຈາກເຮືອນລ້ຽງມ້ອນຫລາຍຈົນເກີນໄປດີທີ່ສຸດບໍ່ຄວນເກີນ 1 ກິໂລແມັດເພາະຈະບໍ່ສະດວກໃນການຂົນສົ່ງໃບມອນ ( ສິ້ນເປືອງແຮງງານ,ໃບມອນຫ່ຽວ ) ສວນມອນບໍ່ຄວນຢູ່ໄກ້ເຮືອນລ້ຽງມ້ອນຈົນເກີນໄປເພື່ອຫລີກເວັ້ນການຕິດເຊື້ອພະຍາດຈາກສິ່ງເສດເຫລືອຈາກການລ້ຽງມ້ອນມ້ອນ ແລະ ຢາຂ້າພະຍາດຕ່າງໆ.



( ຮູບເຮືອນລ້ຽງມ້ອນກັບສວນມອນ ).

## 2.5 ການວາງແຜນປູກຕົ້ນມອນ

ກ່ອນອື່ນ ຕ້ອງອີງໃສ່ຄວາມສາມາດທາງດ້ານແຮງງານ ( ຕ້ອງວາງແຜນ ) ຈະລ້ຽງມ້ອນເປັນປະເພນີ,ລ້ຽງເພື່ອສ້າງລາຍຮັບເສີມ ຫລື ລ້ຽງເປັນອາຊີບຫລັກ.

- ລ້ຽງມ້ອນ 1 ແຜ່ນມີຈຳນວນ 20 000 ໂຕຕ້ອງການມີສວນມອນ 1 ໄລ່ຖ້າຈະລ້ຽງ 1 ແຜ່ນ ແຕ່ລະເດືອນຢ່າງຕໍ່ເນື່ອງຕ້ອງມີສວນມອນຫລາຍກ່ວາ 1 ໄລ່ (ຖ້າເອົາແນວພັນໄວ້ 1 ແມ່ບີ້ລ້ຽງແຕ່ນ້ອຍຈົນມ້ອນ ເຮັດຮັງຈະໝົດໃບມອນປະມານ 5 - 6 ກິໂລ ( ສຳລັບມ້ອນພື້ນເມືອງ ) ແຕ່ຢ່າລືມຄຳນຶງເຖິງ ປັດໃຈ 3 ຢ່າງເຊັ່ນ:
- ແຮງງານລ້ຽງມ້ອນສາວໄໝ.
- ປະລິມານໃບມອນທີ່ມີໃນສວນ.
- ອຸປະກອນການລ້ຽງ, ເນື້ອສຳລັບລ້ຽງມ້ອນ.



- ມ້ອນເຮັດຮັງໄດ້ 2 ວັນ ໃຫ້ເລີກຜ້າປົກຈໍ່ອອກໃຫ້ອາກາດລ່ວງ ອາກາດແຫ້ງເໝາະສົມຝັກຫລອກຈະສາວງ່າຍ, ຄວາມຊຸ່ມຊື່ນຫລາຍຝັກຫລອກສາວຍາກ.
- ຄວນໃຊ້ເຕົາຖ່ານຫລຸດຄວາມຊຸ່ມເວລາຝົນຕົກໜັກ.

## 3.10 ສາຍເຫດການເກີດພະຍາດ ແລະ ສັດຕູອື່ນໆຂອງໂຕມ້ອນ

**ກ. ເກີດຈາກສິ່ງບໍ່ມີຊີວິດ**

- ໄດ້ແກ່ສະພາບແວດລ້ອມ, ອາຍພິດຈາກສານເຄມີຕ່າງໆ.
- ຄຸນນະພາບ ແລະ ປະລິມານໃບມອນ ຫລື ການບົວລະບັດຮັກສາລ້ຽງເກືອພາໃຫ້ເກີດບາດແຜເປັນຕົ້ນ.

**ຂ. ເກີດຈາກສິ່ງທີ່ມີຊີວິດ**

- ໄດ້ແກ່ຈຸລິນຊີຕ່າງໆເຊັ່ນ: ເຊື້ອລາ, ແບກາເຕີເລຍ, ໄວລັສ, ໂປໂລໂຕຊົວ ລວມທັງສັດອື່ນໆເຊັ່ນ: ແມງວັນລາຍ, ມົດ, ໜູ, ຈີ່ໂກະ, ຈີ່ຈຸ້ມ ...

## 3.11 ສູດຄິດໄລ່ເປີເຊັນເສັ້ນໄໝໃນຮັງຫລອກ ແລະ ໄໝດິບ

**ກ. ສູດຄິດໄລ່ເປີເຊັນເສັ້ນໄໝໃນຮັງຫລອກ.**

$$\text{ເປີເຊັນເສັ້ນໄໝ} = \frac{\text{ນ້ຳໜັກປົ້ຝັກຫລອກເປົ່າ}}{\text{ນ້ຳໜັກຮັງຫລອກເຕັມ}} \times 100$$



( ຮູບມ້ອນສຸກ )

## 3.9 <u>ການເກັບມ້ອນສຸກເຂົ້າຈໍ່ ແລະ ການດູແລຮັກສາ.</u>

- ເກັບມ້ອນສຸກໃຫ້ທັນເວລາຖ້າຊັກຊ້າມ້ອນຈະພົ່ນໄຍຖີ້ມຈະໄດ້ຝັກຫລອກບາງ.
- ເກັບມ້ອນສຸກເຂົ້າຈໍ່ໃຫ້ພໍດີໃນອັດຕາສ່ວນປະມານ 600 ໂຕຕໍ່ 1 ຕາແມັດ.
- ຍິ່ງໃສ່ມ້ອນໃນແຕະຈໍ່ຕຶບເທົ່າໃດ ຍິ່ງມີໂອກາດໄດ້ຮັງແຝດ, ຜິດຮູບປະພັນຫລາຍຂຶ້ນເທົ່ານັ້ນ.
- ຖ້າໃສ່ບາງເກີນໄປກໍເປັນການເປືອງເນື້ອທີ່ແຕະ.
- ໃສ່ຈໍ່ໃນອັດຕາພໍດີແລ້ວໃຊ້ຜ້າປົກປິດປະຕູຕ້ອງການຄວາມມືດ.
- 1 ວັນຕໍ່ມາກວດກາເບິ່ງໂຕທີ່ບໍ່ເຮັດຮັງ, ໂຕຕາຍອອກຈາກຈໍ່.
- ຄວບຄຸມອຸທະພູມໃຫ້ຢູ່ໃນລະດັບເໝາະສົມ 23 - 24 ອົງສາເຊ.
- ຄວາມຊຸ່ມທີ່ເໝາະສົມ 60 - 70%.



## 4 <u>ກຳນົດການໃຊ້ແຮງງານກິດຈະກຳປູກຕົ້ນມອນ</u>

4 ໄລຍະການປູກ:

- ໄລຍະຕົ້ນ 0.75 ມ ໄລຍະແຖວ 1.5 ມ ( ການໃຊ້ແຮງງານຄົນ ).
- ໄລຍະຕົ້ນ 0.75 ມ ໄລຍະແຖວ 2 ມ (ການໃຊ້ລົດໄຖນ້ອຍ ).
- ໄລຍະຕົ້ນ 0.75 ມ ໄລຍະແຖວ 2.5 ມ ( ການໃຊ້ລົດໄຖກາງ ).
- ໄລຍະຕົ້ນ 0.75 ມ ໄລຍະແຖວ 3 ມ ( ການໃຊ້ລົດໄຖໃຫຍ່)
- ໄລຍະຕົ້ນ 1 ມ ໄລຍະແຖວ 1 ມ ( ສຳລັບດິນຄ້ອຍຊັນ ).

**4 ສູດຄິດໄລ່ເບັ້ຍມອນໃນສວນ**

$$\text{ຈຳນວນເບັ້ຍມອນໃນເນື້ອທີ່ຈະປູກ} = \frac{\text{ເນື້ອທີ່ (ຕາແມັດ).}}{\text{ໄລຍະຕົ້ນ (ແມັດ)} \times \text{ໄລຍະແຖວ (ແມັດ)}}$$

## 2.6 <u>ການກຽມດິນປູກມອນ</u>

ໂດຍທົ່ວໄປແລ້ວ ຖ້າມີເງື່ອນໄຂຕ້ອງໄຖຄາດພວນດິນເສຍກ່ອນຈຶ່ງຂຸດຂຸມ ຫລື ຮ່ອງແລ້ວແຕ່ຄວາມເໝາະສົມ.

- ຂຸດຂຸມຂະໜາດ 40 ຊມ X 40 ຊມ ເລິກ 40 ຊມ.
- ຂຸດຮ່ອງຂະໜາດກ້ວາງ 40 ຊມ X 40 ຊມ ເລິກ 40 ຊມ ຄວາມຍາວ ແລ້ວແຕ່ຄວາມຕ້ອງການໃນຂຸມ ຫລື ຮ່ອງທີ່ກຽມນັ້ນຕ້ອງເອົາເສດພືດ, ເພື່ອງເຂົ້າລົງຫລາຍພໍສົມຄວນຈົນເກືອບ

ເຕັມ, ເອົາຝຸ່ນຄອກໂຮຍໃສ່ ,ໂຮຍປູນຂາວລົງໄປ ອີກຖົມດິນໃຫ້ເຕັມປະໄວ້ຢ່າງໜ້ອຍ 30 ວັນຂຶ້ນ ໄປ ( ເພາະໄລຍະ 30 ວັນເປັນການຍ່ອຍສະລາຍຂອງເສດພືດ, ເປັນໄລຍະແຜງຄວາມຮ້ອນຖ້າປູກຕົ້ນມອນໄລຍະນີ້ຕົ້ນມອນຈະຕາຍ.



( ຮູບສວນມອນທີ່ປູກເປັນແຖວ ).

## 2.7 ລະດູການ - ການປູກຕົ້ນມອນ

ໂດຍທົ່ວໄປແລ້ວສາມາດປູກຕົ້ນມອນໄດ້ທຸກລະດູຖ້າຫາກວ່າສະຖານທີ່ ແຫ່ງນັ້ນມີຊົນລະປະທານນໍ້າສະດວກຕະລອດປີ.

- ຖ້າບ່ອນປູກມອນທີ່ອາໃສແຕ່ທຳມະຊາດຕ້ອງໄດ້ປູກໄລຍະຕົ້ນລະດູຝົນໝາຍຄວາມວ່າ: ຕ້ອງປູກໄລຍະຫລັງປີໃໝ່ລາວ ( ເດືອນ 4 – 5 ) ຂອງທຸກໆປີທີ່ມີຝົນຕົກແດ່ແລ້ວ.
- ຖ້າເປັນການປູກດ້ວຍງ່າຕ້ອງປູກກ່ອນເດືອນເມສາ ( 4 ) ທຸກໆປີຖ້າ ສະພາບດິນແຫ້ງແລ້ງບໍ່ເໝາະສົມກັບການປູກງ່າເວລາເຄື່ອນຍ້າຍເບັ້ຍ ມອນອອກຈາກໜານຊຳໄປປູກໃນສວນຕ້ອງທຳການຕັດ



## 3.8 ໂຕມ້ອນນອນ-ມ້ອນຕື່ນ-ມ້ອນສຸກ

**ກ. ມ້ອນນອນເອີ້ນວ່າ ( ມ້ອນລອກຄາບ ).**

- ໂຕມ້ອນຕັ້ງຫົວຂຶ້ນ - ບໍ່ເໜັງບໍ່ຕີງ - ບໍ່ກິນໃບມອນ.
- ຫົວໃຫຍ່ - ປາກນ້ອຍ - ມີສີເຫລືອງ - ຂາມີສີໃສໆ.

**ຂ. ມ້ອນຕື່ນ**

- ໂຕມ້ອນເລືອຕາມໃບມອນ-ກິນໃບມອນ-ຫົວນ້ອນລົງ.



( ຮູບມ້ອນກິນໃບມອນ)

**ຄ. ມ້ອນສຸກ**

- ໂຕມ້ອນຫົດສັ້ນເຂົ້າ.
- ລຳຕົວເປັນສີເຫລືອງ ( ມ້ອນຝັກຫລອກເຫລືອງ ).
- ລຳຕົວສີໃສໆ (ມ້ອນຝັກຫລອກສີຂາວ).
- ຊູຫົວຂຶ້ນແກ່ວງຫົວໄປມາຊອກຫາບ່ອນເຮັດຮັງ ( ເຮັດຝັກຫລອກ ).
- ຂີ້ມ້ອນມີຂະໜາດໃຫຍ່ບີບຈະນຸ່ມ, ມີສີຂຽວ.
- ປາກມີເສັ້ນໄຍພົ່ນອອກມາ.

**<u>ຕາຕະລາງລ້ຽງມ້ອນອາຍຸແກ່ ( ອາຍຸ4 – 5 )</u>**

| ອາຍຸ | ໃບມອນ | ອຸນະພູມ | ຄວາມຊຸ່ມ | ເວລາກິນໃບມອນ | ເວລານອນ | ເນື້ອທີ່ |
|---|---|---|---|---|---|---|
| 4 | 64.5ກກ | 25ອົງສາ | 75-80% | 3ມື້5ຊົ່ວໂມງ | ປະມານ2ມື້ | 6.4-10 ຕາແມັດ |
| 5 | 235ກກ | 24ອົງສາ | 70-75% | 6ມື້ | 0 | 15-20 ຕາແມັດ |

ອາຍຸ 5 ຕ້ອງເສຍຂີ້ທຸກໆມື້, ຂະຫຍາຍເນື້ອທີ່ບໍ່ໃຫ້ໂຕມ້ອນແໜ້ນໃນກະດົ້ງ, ເກືອໃບມອນເພີ່ມຂຶ້ນໃຊ້ໃບມອນແກ່, ໃຫ້ຢ່າງໜ້ອຍ 4 ຄາບຕໍ່ວັນ.

4 **ສັງເກດສະພາບຂອງໂຕມ້ອນທຸກໆເຊົ້າ ກ່ອນໃຫ້ອາຫານຖ້າມີອາການເປັນພະຍາດໃຫ້ແຍກໂຕທີ່ເປັນພະຍາດອອກກ່ອນຈຶ່ງເກືອໃບມອນ ( ມ້ອນທີ່ຕິດພະຍາດແຍກອອກມາບໍ່ໃຫ້ຖິ້ມທົ່ວທີບ, ບໍ່ເອົາໄປເກືອປາ, ບໍ່ເອົາໄປເກືອໄກ່ຝັງຖິ້ມຢ່າງດຽວ** ).

~ ການລ້ຽງມ້ອນລະດູຝົນຕ້ອງເອົາໃຈໃສ່ພິເສດເພາະອາກາດຮ້ອນ, ຄວາມຊຸ່ມສູງເໝາະສົມກັບການຂະຫຍາຍຕົວຂອງເຊື້ອພະຍາດໂດຍສະເພາະ ( ເຊື້ອລາ, ໄວລັສ ).

- ລ້ຽງມ້ອນໃສ່ຫ່າງໆ, ເກືອບາງໆແຕ່ເກືອຫລາຍເທື່ອ, ໃບມອນປຽກຕ້ອງເຊັດ ຫລື ພຶງກ່ອນ ຈຶ່ງນຳມາເກືອມ້ອນ.



ແຕ່ງກິ່ງ ແລະ ຮາກ. ຮາກຍາວເກີນໄປໃຫ້ຕັດອອກສ່ວນກິ່ງທີ່ບໍ່ສົມບູນໃຫ້ຕັດຈຳຕົ້ນ ສ່ວນກິ່ງສົມບູນທີ່ປະໄວ້ນັ້ນໃຫ້ຕັດປະໄວ້ປະມານ 10 ຊມ ເທົ່ານັ້ນ ( ບໍ່ຄວນຖອນເບັ້ຍມອນອອກຈາກໜານໄວ້ຫລາຍວັນເພາະຕົ້ນມອນຈະຫ່ຽວແຫ້ງ ແລະ ຕາຍ.

## 2.8 <u>**ການດູແລຮັກສາສວນມອນ**</u>

ຫລັງຈາກປູກຕົ້ນມອນໃນສວນເປັນທີ່ຮຽບຮ້ອຍແລ້ວຕ້ອງໄດ້ເອົາໃຈໃສ່ ຕິດຕາມຢ່າງໃກ້ສິດຈະໄດ້ຮູ້ເປີເຊັນລອດຕາຍ ແລະ ປູກແທນທັນເວລາ,ອາກາດແຫ້ງແລ້ງ ຫລື ນ້ຳຂັງແກ້ໄຂໃຫ້ທັນເວລາດູແລເສຍຫຍ້າ ບໍ່ໃຫ້ຫຍ້າຮົກເຮື້ອຖ້ວມຕົ້ນມອນກໍລະນີທີ່ມີການປ່ອຍສັດກໍຕ້ອງໄດ້ຮົ້ວສວນເປັນຢ່າງດີ.

- ແຕ່ລະປີໃຊ້ລົດໄຖຕາມຫວ່າງແຖວຂອງຕົ້ນມອນເພື່ອເປັນການພວນດິນ.
- ການຮັກສາຄວາມຊຸ່ມຊື່ນ ແລະ ກຳຈັດວັດສະພືດໃຊ້ເຟືອງເຂົ້າ, ກາບຖົ່ວ, ແກບຄຸມໜ້າດິນຕາມຫວ່າງຕົ້ນມອນຈະເປັນການຮັກສາຄວາມຊຸ່ມ ແລະ ໃສ່ຝຸ່ນໄປໃນຕົວ.



( ຮູບເສຍຫຍ້າໃສ່ຝຸ່ນຄຸມດິນ )

**4 ໃສ່ຝຸ່ນຕົ້ນຕອນມີ 3 ວິທີທີ່ນິຍົມໃຊ້ຄື:**

- ຕົ້ນມອນທີ່ຫາກໍ່ປູກປີທຳອິດໃຊ້ຈົກນ້ອຍຂຸດອ້ອມກົກຕົ້ນມອນຫ່າງຈາກຕົ້ນມອນປະມານ 25 – 30 ຊມ ໂຮຍຝຸ່ນຄອກໃສ່ຕາມຮ່ອງທີ່ຂຸດແລ້ວຖົມໄວ້.
- ຂຸດຂຸມລະຫວ່າງຕົ້ນຕໍ່ຕົ້ນ, ເວັ້ນຫວ່າງຈຶ່ງຂຸດອີກຂຸມໜຶ່ງ, ເສຍຫຍ້າຕາມຫວ່າງຕົ້ນມອນນັ້ນລົງຂຸມໃຫ້ເຕັມໃຊ້ຝຸ່ນຄອກໂຮຍລົງໄປແລ້ວຖົມດິນປະໄວ້ເຮັດແບບນີ້ປີລະຄັ້ງດ້ວຍວິທີສັບປ່ຽນບ່ອນຂຸດ.
- ຂຸດຮ່ອງລະຫວ່າງແຖວຕາມລວງຍາວຂະໜາດກ້ວາງ 30 ຊມ ເລິກ 30 ຊມ ຍາວຢຽດຕາມຫວ່າງແຖວຂອງຕົ້ນມອນ ( ເວັ້ນຫວ່າງແຖວຈຶ່ງຂຸດອີກ ) ເສຍຫຍ້າຕາມຫວ່າງຕົ້ນມອນລົງຮ່ອງໂຮຍຝຸ່ນຄອກລົງໄປໂຮຍປູນຂາວຊ້ຳອີກ ( ຖ້າມີ ).

## 2.9 ການຕັດແຕ່ງຕົ້ນມອນ

ການຕັດແຕ່ງຕົ້ນມອນ ມີຄວາມຈຳເປັນອັນໃຫຍ່ຫລວງເປັນການຍົກຄຸນນະພາບ ແລະ ປະລິມານໃບມອນ, ຖ້າມອນບໍ່ມີການ



**ຂ. ການເສຍຂີ້ໂຕມ້ອນຄວນປະຕິບັດດັ່ງນີ້:**

- ໃຊ້ຕານ່າງເສຍຂີ້ມ້ອນ, ໃຊ້ໄມ້ຖູບໍ່ຄວນໃຊ້ມືຈັບໂຕມ້ອນ.
- ອາຍຸ 1 ເສຍຂີ້ 1 ເທື່ອກ່ອນມ້ອນນອນຄັ້ງທີ່ 1
- ອາຍຸ 2 ເສຍຂີ້ 2 ເທື່ອ, ຫລັງຕື່ນນອນຄັ້ງທີ່ 1 ແລະ ກ່ອນນອນຄັ້ງທີ່ 2.
- ອາຍຸ 3 ເສຍຂີ້ 2 ເທື່ອ, ຫລັງຕື່ນນອນຄັ້ງທີ່ 2 ແລະ ກ່ອນນອນ ຄັ້ງທີ່ 3.

**ຄ. ການຂະຫຍາຍເນື້ອທີ່:**

- ເພື່ອບໍ່ໃຫ້ໂຕມ້ອນຢູ່ຢ່າງແອອັດ.
- ຫລຸດຄວາມຊຸ່ມ ແລະ ຄວາມຮ້ອນໃນກະດົ້ງມ້ອນ.
- ໃຫ້ໂຕມ້ອນໄດ້ກິນໃບມອນຢ່າງທົ່ວເຖິງ.

## 3.7 ການດຳເນີນການລ້ຽງມ້ອນອາຍຸແກ່

ກ. ການຄວບຄຸມອຸນະພູມ ແລະ ຄວາມຊຸ່ມ:

- ຫລຸດຄວາມຮ້ອນ: ເປີດປ່ອງຢ້ຽມ, ຊີດນ້ຳໃສ່ພື້ນເຮືອນລ້ຽງ, ຊີດນ້ຳໃສ່ຫລັງຄາມຸງສັງກະສີ.
- ເພີ່ມຄວາມອຸ່ນ: ໄຕ້ດອກໄຟ ຫລື ດັງເຕົາຖ່ານໃນເຮືອນລ້ຽງມ້ອນ.
- ຫລຸດຄວາມຊຸ່ມ: ເປີດປ່ອງຢ້ຽມໃຫ້ອາກາດຖ່າຍເທ ຫລື ໃຊ້ພັດລົມເປົ່າ.
- ເພີ່ມຄວາມຊຸ່ມ: ໃຊ້ກ້ອງຊີດນ້ຳຝອຍ, ໃຊ້ແພຈຸບນ້ຳພໍໝາດໆອ້ອມຮ້ານລ້ຽງ ຫລື ທົດພື້ນເຮືອນລ້ຽງ.

**ຕາຕະລາງການລ້ຽງມ້ອນ20000ໂຕ**

| ອາຍຸ | ຈຳນວນໃບມອນ | ອຸນະພູມ | ຄວາມຊຸ່ມ | ເວລາກິນໃບມອນ | ເວລານອນ | ເນື້ອທີ່ |
|---|---|---|---|---|---|---|
| 1 | 1.8 -1.9 ກກ | 28 ອົງສາ | 80-90% | 2ມື້3ຊົ່ວໂມງ | 1ມື້ | 0.4-1.6 ຕາແມັດ |
| 2 | 5 ກກ | 27ອົງສາ | 80-85% | 2ມື້ | 1ມື້ | 1.6-3.2 ຕາແມັດ |
| 3 | 15 ກກ | 26ອົງສາ | 70-80% | 2.5ມື້ | 1ມື້ | 3.2-6.4 ຕາແມັດ |

## 3.5 ການປິດໃບມອນ

- ການປິດໃບມອນຄວນຫລີກເວັ້ນເວລາແດດຮ້ອນໂພດ ແລະ ເວລາຝົນກຳລັງຕົກ.ປິດຕອນເຊົ້າທີ່ແດດບໍ່ທັນຮ້ອນ ແລະ ຕອນແລງຫລັງ 4 ໂມງແລງ.
- ເວລາເກືອໃຫ້ຊອຍໃບມອນເປັນຮູບ 4 ຫລ່ຽມຍາວ, ລວງກ້ວາງເທົ່າ ກັບລວງຍາວຂອງໂຕມ້ອນ, ລວງຍາວເທົ່າ 2 ເທື່ອຂອງລວງກ້ວາງ.

## 3.6 ການເສຍຂີ້ມ້ອນ

**ກ.ຈຸດປະສົງ:**

- ຫລຸດຜ່ອນຄວາມຊຸ່ມໃນກະດົ້ງມ້ອນ.
- ໃຫ້ໂຕມ້ອນໄດ້ກິນໃບມອນໃໝ່ ແລະ ສົດຢູ່ສະເໝີ.
- ນຳເອົາເສດໃບມອນທີ່ເຫລືອ ແລະ ເຊື້ອພະຍາດໄປຖິ້ມ.



ຕັດແຕ່ງໃບຈະນ້ອຍ ມັກເກີດພະຍາດເກັບກ່ຽວໃບມອນຍາກ ການຕັດແຕ່ງກໍຂຶ້ນ ກັບຈຸດປະສົງ ແລະ ການວາງແຜນສວນມອນທີ່ປູກເຮັດແນວພັນຈະຕັດພຽງປີລະຄັ້ງຄື: ຕັດຕ່ຳເທົ່ານັ້ນ

= **ສ່ວນວ່າສວນມອນສຳລັບລ້ຽງມ້ອນຕ້ອງຕັດຫລາຍຄັ້ງຕໍ່ປີດັ່ງນີ້:**

**ກ.ຕັດຕ່ຳ**

ຕັດ 1 ຄັ້ງຕໍ່ປີ ໃນຊ່ວງລະດູແລ້ງທີ່ຕົ້ນມອນພັກຕົວຄື: ລະຫວ່າງເດືອນ 12 - 3 ຂອງທຸກໆປີ.

**ວິທີຕັດ**: ຖ້າເປັນຕົ້ນມອນປູກປີທຳອິດໃຫ້ຕັດຫ່າງຈາກໜ້າດິນ 25 - 30 ຊມ. ຖ້າເປັນຕົ້ນມອນປີທີ 2 ຫລື 3 ຂຶ້ນໄປໃຫ້ຕັດຫ່າງຈາກບ່ອນຕັດປີທຳອິດປະມານ 5 – 10 ຊມ. ຕັດກ່ອນການລ້ຽງມ້ອນ 90 ວັນ.



( ຮູບການຕັດຕ່ຳຕົ້ນມອນ )

**ຂ.ຕັດກາງ**

ແມ່ນຕັດຫລັງຈາກເກັບກ່ຽວໃບມອນໄປລ້ຽງມ້ອນຄັ້ງທີ1ຂອງປີ ( ເກັບຜົນການຕັດຕ່ຳ ) ຕັດກ່ອນການລ້ຽງມ້ອນ 60 - 75 ວັນ.

**ວິທີຕັດ**: ສັງເກດເບິ່ງສີຂອງກິ່ງ ຫລື ລຳຕົ້ນຂອງມອນຈະມີສີນ້ຳຕານເຊື່ອມຕໍ່ກັບສີຂຽວໃຫ້ຕັດລະຫວ່າງກາງສີນ້ຳຕານເຊື່ອມຕໍ່ກັບສີຂຽວ ( ລະຫວ່າງກາງຂອງລຳຕົ້ນ ).



( ຮູບຕັດກາງ ).

**ຄ.ຕັດສູງຫລື ເດັດຍອດ**

ເໝາະສົມກັບການກຽມໃບມອນລ້ຽງມ້ອນອາຍຸນ້ອຍ(ໃຫ້ຍອດຫລາຍມີໃບອ່ອນ)ຕັດກ່ອນການລ້ຽງມ້ອນ 35 - 40 ວັນ.

## 2.10 ການກຽມສວນມອນເພື່ອລ້ຽງມ້ອນອາຍຸນ້ອຍ-ອາຍຸແກ່.

ກ. ມ້ອນອາຍຸນ້ອຍກຳນົດແຕ່ອາຍຸ 1 - 3 ການເກັບໃບມອນຕ້ອງປະຕິ ບັດດັ່ງນີ້:

~ ມ້ອນອາຍຸ 1 ເກັບໃບມອນທີ 1 - 3 ( ນັບຍອດລົງ ).

~ ມ້ອນອາຍຸ 2 ເກັບໃບມອນທີ 4 – 6.

~ ມ້ອນອາຍຸ 3 ເກັບໃບມອນທີ 7 – 9.



- 5 ນາທີຕໍ່ມາທຳການປັດໂຕມ້ອນນ້ອຍດ້ວຍຂົນໄກ່ໃສ່ກະດົ້ງທີ່ກຽມໄວ້.
- ຂະຫຍາຍ ( ເຂ່ຍ ) ໂຕມ້ອນນ້ອຍໃຫ້ສະໝ່ຳສະເໝີປະມານເທົ່າ 2 ເທົ່າ ເນື້ອທີ່ຂອງແຜ່ນໄຂ່.
- 5 ນາທີ ຕໍ່ມາຊອຍໃບມອນອ່ອນໃບທີ 1 ເກືອມ້ອນເປັນຄາບທຳອິດ.



( ຮູບກຳລັງປັດມ້ອນ )

## 3.4 ດຳເນີນການາລ້ຽງມ້ອນອາຍຸນ້ອຍ ( ອາຍຸ 1 -3 ).

ໂຕມ້ອນອາຍຸນ້ອຍ ມີຄວາມອ່ອນແອສາມາດຕິດເຊື້ອພະຍາດໄດ້ງ່າຍບໍ່ ວ່າທາງຜິວໜັງກໍຄືທາງອາຫານ, ຕ້ອງໄດ້ເອົາໃຈໃສ່ດູແລເປັນພິເສດໂດຍ ສະເພາະອັນດັບ 1 ຄືການອະນາໄມຮັກສາຄວາມສະອາດ, ການປິດໃບມອນ, ການຊອຍໃບມອນ, ການຂະຫຍາຍ ແລະ ການເສຍຂີ້ມ້ອນອາຍຸ ນ້ອຍໃຊ້ເວລາກິນ ໃບມອນ 10 - 11 ວັນວັນລະ 3 - 4 ຄັ້ງ.

- ສຳເລັດແລ້ວເອົາອຸປະກອນມາເກັບໄວ້ທີ່ເດີມ,
- ກ່ອນເອົາມ້ອນເຂົ້າລ້ຽງຄັ້ງຕໍ່ໄປປະມານ 3 - 5 ວັນໃຫ້ອົບ ຫ້ອງ ດ້ວຍ ຢາກູ້ລິນອີກ 1 ຄັ້ງໃຫ້ ທົ່ວຫ້ອງໃຊ້ເວລາ 3 - 5 ວັນ ຕໍ່ມາຈຶ່ງສາ ມາດເອົາມ້ອນເຂົ້າລ້ຽງໄດ້. ( ໃຊ້ໃນອັດຕາສ່ວນ ກູ້ລິນ 60% ຈຳນວນ 100 ກະລາມ ປະສົມກັບນ້ຳ 10 ລິດ ຊີດໃຫ້ທົ່ວຫ້ອງ )

## 3.3 <u>ການປັດມ້ອນນ້ອຍລ້ຽງຄາບທຳອິດ.</u>

- ໄຂ່ມ້ອນສ່ວນໃຫຍ່ຈະວາງໃສ່ເຈັ້ຍ ຫລື ແຜ່ນແພຮູ້ແລ້ວວ່າໄຂ່ມ້ອນພື້ນ ເມືອງປົກກະຕິມີອາຍຸພຽງ 9 - 11 ວັນ ເທົ່ານັ້ນດັ່ງນັ້ນໄກ້ຈະຮອດມື້ຕ້ອງຕິດຕາມຖ້າອຸນະພູມປົກກະຕິໄຂ່ມ້ອນຈະ ແຕກມື້ທີ 9 ຫລື 10 ເທົ່ານັ້ນ ຍົກເວັ້ນອາກາດໜາວ.
- ເປີດຊອງໄຂ່ມ້ອນໃສ່ແສງເວລາ 6 ໂມງເຊົ້າປັດມ້ອນເວລາ 9 -10 ໂມງເຊົ້າ ( ບໍ່ຄວນລ້ຽງມ້ອນໂດຍບໍ່ປັດ ) ລ້ຽງມ້ອນໂດຍບໍ່ປັດ ມ້ອນຈະລ້ຽງຍາກມ້ອນນອນມ້ອນຕື່ນບໍ່ພ້ອມກັນ, ມີມ້ອນຄອດຫລາຍ ມ້ອນໄດ້ນອນໃຕ້ໃບມອນ.

~ **<u>ຂັ້ນຕອນການປັດມ້ອນ</u>**:

- ໂຮຍຢາເປບໂຊ່ນໃສ່ໂຕມ້ອນໃຫ້ທົ່ວປະໄວ້ປະມານ 3 - 5 ນາທີ ( ຖ້າມີ ).
- ຊອຍໃບມອນອ່ອນໆທີ່ເປັນສີນ້ຳຕານ ( ໃບໄກ້ກັບຍອດ ) ໂຮຍ ໃສ່ໂຕມ້ອນໃຫ້ທົ່ວ.



ຢາກໄດ້ໃບມອນຕາມທີ່ກ່າວມາຂ້າງເທິງຕ້ອງຕັດແຕ່ງຕົ້ນມອນໃຫ້ຖືກ ຕາມເຕັກນິກໄລຍະອາຍຸ 1 - 3 ມ້ອນຕ້ອງການໃບມອນທີ່ອ່ອນຈຶ່ງມີ ຄວາມຈຳເປັນຕ້ອງແບ່ງຕັດແຕ່ງສະເພາະ.

**ຂ. ມ້ອນແກ່ກຳນົດແຕ່ອາຍຸ** 4 - 5

ມ້ອນອາຍຸແກ່ຕ້ອງການໃບມອນຫລາຍ ແລະ ໃບແກ່ ທີ່ມີສີຂຽວເຂັ້ມ ເພາະເປັນໄລຍະຕົວມ້ອນສ້າງຕ່ອມໄຍໄໝຜະລິດເປັນເສັ້ນໄໝໃນລຳຕົວ ( ຫລີກເວັ້ນໃບທີ່ເປັນພະຍາດແລະແກ່ຈົນກອບ ).



( ຮູບສວນມອນສຳລັບມ້ອນແກ່ ).

## 2.11 <u>ພະຍາດມອນ ແລະ ວິທີກຳຈັດ</u>

ພະຍາດມອນທີ່ມັກພົບເຫັນສ່ວນຫລາຍແມ່ນ: ພະຍາດຮາກເນົ່າ, ພະຍາດໃບດ່າງ, ພະຍາດ, ພະຍາດລາແປ້ງຂາວ, ພະຍາດລາໝ້ຽງ ແລະ ອື່ນໆ.

**<u>ວິທີກຳຈັດ</u>**: ເມື່ອພົບເຫັນພະຍາດດັ່ງກ່າວໃຫ້ຕັດຮອບຮອມໄປເຜົາໄຟຖິ້ມ ບໍ່ໃຫ້ແຜ່ລາມໄປບ່ອນອື່ນ, ຕ້ອງຕັດແຕ່ງຕົ້ນມອນຕາມລະດູການ.

# ບົດທີ3

# ການລ້ຽງມ້ອນ

## 3.1 ການກຽມອຸປະກອນການລ້ຽງມ້ອນ-ເຮືອນລ້ຽງມ້ອນ

ກ່ອນການລ້ຽງມ້ອນ ຕ້ອງໄດ້ສຳຫລວດເບິ່ງອຸປະກອນທີ່ຈຳເປັນທີ່ຮັບໃຊ້ມີພຽງພໍ ຫລື ຍັງມີຫຍັງຂາດເຫລືອເຊັ່ນ: ກະດົ້ງມ້ອນ ( ໄຫ່ມ້ອນ ), ຮ້ານມ້ອນ, ຜ້າປົກມອນ, ຜ້າປົກມ້ອນ, ຂົນໄກ່, ຊຽງ, ມີດ, ໄມ້ຖູ່, ກະຕ່າ, ກະຈາດ, ຕານ່າງເສຍຂີ້ມ້ອນ, ຈໍ່ມ້ອນສຸກຈຳພວກນີ້ເປັນຕົ້ນ.



( ຮູບອຸປະກອນການລ້ຽງມ້ອນ ).

**ກ. ການລ້ຽງມ້ອນສ້າງລາຍຮັບເສີມຕ້ອງມີເຮືອນລ້ຽງມ້ອນ.**

ເພື່ອການປ້ອງກັນສັດຕູໂຕມ້ອນໄດ້ຢ່າງດີເຊັ່ນ: ໜູ, ແມງວັນລາຍ, ມົດ, ຈີ່ໂກະ, ຈີ່ກ້ຽມ ແລະ ອື່ນໆ.

**ຂ. ສະຖານທີ່ຕັ້ງເຮືອນລ້ຽງມ້ອນຕ້ອງເອົາໃຈໃສ່ຄື:**

- ອາກາດປອດໂປ່ງ.
- ຫ່າງໄກຈາກສະຖານທີ່ໃຊ້ສານເຄມີ.



- ຫ່າງໄກຈາກຊຸມຊົນທີ່ແອອັດ.
- ໃກ້ກັບແຫລ່ງນ້ຳ ສະດວກເວລາອະນາໄມອຸປະກອນ ແລະ ເຮືອນລ້ຽງ.
- ບໍ່ໄກສວນມອນເກີນໄປ.



( ຮູບເຮືອນລ້ຽງມ້ອນ ).

## 3.2 ການອະນາໄມອຸປະກອນຮັບໃຊ້ ແລະ ເຮືອນລ້ຽງມ້ອນ

- ຫລັງຈາກລ້ຽງມ້ອນສຳເລັດເອົາມ້ອນອອກຈາກເຮືອນລ້ຽງແລ້ວ ບໍ່ໃຫ້ເອົາອຸປະກອນໄປ ໃສຈັກອັນໃຫ້ຊີດຢາອົບຂ້າເຊື້ອພະຍາດ ແຊ່ໄວ້ 2 - 3 ວັນ ( ປິດປະຕູໄວ້ບໍ່ໃຫ້ເດັກນ້ອຍມາຫລິ້ນ ).
- ເອົາອຸປະກອນທັງໝົດອອກໄປລ້າງຖູໃສ່ສະບູຄັກແນ່ຕາກແດດໃຫ້ແຫ້ງ.
- ລ້າງເຮືອນລ້ຽງມ້ອນຖູພື້ນ,ຮ້ານມ້ອນ,ຝາຂ້າງເຮືອນລ້ຽງໃຫ້ລະອຽດ
- ເປີດປ່ອງຢ້ຽມໃຫ້ແຫ້ງ.